# ໂຄງການ WorkFirst

ການຊ່ວຍເຫລືອທ່ານໃຫ້ຊ່ວຍຕົວທ່ານເອງແລະຄອບຄົວຂອງທ່ານ.



DSHS
WASHINGTON STATE
Department of Social and Health Services

WASHINGTON
WorkFirst

# ການບໍລິການຂອງ WorkFirst

ການບໍລິການຕ່າງໆໃນໂຄງການ **WorkFirst** ແມ່ນມີໄວ້ເພື່ອຊ່ວຍທ່ານໂດຍຜ່ານສະຖານະການຊົ່ວຄາວຂອງທ່ານ. ການທີ່ພວກເຮົາຢູ່ນີ້ກໍ່ເພື່ອຈຸດປະສົງຊ່ວຍເຫລືອທ່ານໃຫ້ມີວຽກເຮັດພ້ອມທັງຮັກສາວຽກໄວ້. ພວກເຮົາສາມາດຊ່ວຍທ່ານຄົ້ນຄວ້າເຣື່ອງ:

- ຄວາມຊຳນານໃນວຽກງານ, ຄວາມສາມາດ, ແລະ ຄວາມສົນໃຈຕ່າງໆທີ່ທ່ານມ
- ວຽກງານຕ່າງໆທີ່ມີຢູ່ໃນເຂດຂອງທ່ານ

# ໂອກາດຂອງ WorkFirst

**ທ່ານຢາກເຮັດວຽກມີເງິນຣາຍໄດ້ສຳຣັບຄອບຄົວຂອງທ່ານບໍ່?**

ໂຄງການ**WorkFirst**ສາມາດຊ່ວຍໃຫ້ທ່ານເຮັດວຽກມີເງິນພຽງພໍເພື່ອຈະເອົາໃຫ້ລູກຂອງທ່ານ. ພວກເຮົາມີຫລາຍໆໂອກາດໄວ້ໃຫ້ທ່ານ ຊຶ່ງຣວມມີ:

- ຊ່ວຍນຳການຊອກວຽກເຮັດ
- ການຝຶກອົບຣົມ ແລະ ການສຶກສາ
- ໂຄງການປະສົບການວຽກງານ
- ຊ່ວຍໃນຄ່າໃຊ້ຈ່າຍຕ່າງໆ ໃນການເຮັດວຽກ, ເຊັ່ນຄ່າການຂົນສົ່ງ ແລະ ຝາກເດັກ



# ເຮັດວຽກຈ່າຍເງິນໃຫ້!

ເຮັດວຽກແມ່ນດີກວ່າເງິນຊ່ວຍເຫລືອແວວແຟຣ໌.

**ເມື່ອໃດທ່ານຖືເອົາເຊັກເບີກເງິນມາເຮືອນ,**
**ທ່ານສາມາດຊື້ເອົາຫລາຍສິ່ງຫລາຍຢ່າງສຳລັບຄອບຄົວຂອງທ່ານ!**

| ເງິນຊ່ວຍເຫລືອແວວແຟຣ | ເຊັກເບີກເງິນຈາກເຮັດວຽກ |
|---|---|
| $706.00 ຕໍ່ເດືອນ* | $2,800.00 ຕໍ່ເດືອນ<br>($16.28 ຕໍ່ຊົ່ວໂມງສຳລັບ 40 ຊົ່ວໂມງເຮັດວຽກອາທິດນຶ່ງ) ** |

* ເງິນຊ່ວຍເຫລືອສຳລັບຄອບຄົວສາມຄົນ

** ອີງຕາມຄ່າແຮງງານຕໍ່າສຸດຂອງຣັດເລີ້ມຕົ້ນເດືອນແຈນຢູຣີ 2024

# ການຕີຣາຄາອັນຄົບຖ້ວນ

**ໄດ້ຮັບການຕີຣາຄາອັນຄົບຖ້ວນມຸ່ງໝາຍໃສ່ຄອບຄົວຊຶ່ງຈະຊ່ວຍເຫລືອທ່ານ:**

- ຊີ້ບອກການບໍຣິການແລະກິຈກັມຕ່າງໆທີ່ຈະຊ່ວຍທ່ານໃຫ້ບັນລຸເຖິງເປົ້າໝາຍວຽກງານຂອງທ່ານ.
- ສຳຣວດເບິ່ງຄວາມຕ້ອງການດ້ານການສຶກສາແລະການຝຶກຝົນອົບຮົມແລະຄວາມສົນໃຈຕ່າງໆ.
- ຊີ້ບອກຄວາມຊຳນານແລະຄວາມເຂັ້ມແຂງຂອງທ່ານ.
- ແກ້ໄຂສິ່ງກີດກັ້ນຕ່າງໆຊຶ່ງອາດຈະຈຳກັດຄວາມສາມາດຂອງທ່ານທີ່ຈະເຮັດວຽກໄດ້, ຊອກຫາວຽກ, ຫລືກະຕຽມສຳລັບວຽກ.
- ເຮັດເປົ້າໝາຍວຽກງານໃນໄລຍະສັ້ນ—ແລະໄລຍະຍາວ.



# ການປັບໄຫມລົງໂທດ

ໂຄງການ **WorkFirst** ເອື້ອເຟື້ອການອູ້ມຊູ ແລະ ການບໍຣິການຫລາຍໆ ຢ່າງເພື່ອຈະຊ່ວຍທ່ານຜ່ານຜ່າສະພາບການຊີ່ວຄາວຂອງທ່ານ. ທ່ານຕ້ອງໄດ້ເຂົ້າຮ່ວມໃນໂຄງການ ແລະ ສວຍໂອກາດເອົາການອູ້ມຊູທີ່ຖືກອອກແບບມາເພື່ອຈະຊ່ວຍຊອກເອົາ ແລະ ຮັກສາວຽກງານໄວ້. ຖ້າຫາກວ່າທ່ານເລືອກທີ່ຈະບໍ່ເຂົ້າຮ່ວມນຳ, ທ່ານຈະສ່ຽງນຳການສູນເສັຽເງິນສົດຊ່ວຍເຫລືອຂອງທ່ານ.

ພວກເຮົາຢາກຈະຊ່ວຍເຫລືອທ່ານກໍ່ສ້າງແຜນການທີ່ດີກວ່າສຳລັບທ່ານ ແລະ ລູກຂອງທ່ານ, ແຕ່ວ່າທ່ານຕ້ອງເຮັດສ່ວນຂອງທ່ານ, ອີກດືກັນ.



# ຊ່ວຍໃນການຊອກວຽກງານ

**ພະນັກງານຜູ້ຊ່ຽວຊານທາງດ້ານບໍຣິການວຽກງານຈະເຮັດວຽກນຳທ່ານເພື່ອຈະ:**

- ຄົ້ນຄວ້າຊອກຫາຂ່າວຂໍ້ມູນທີ່ມີຄ່າກ່ຽວກັບຄວາມສົນໃຈ ແລະ ຄວາມຊຳນານໃນວຽກງານຂອງທ່ານ.
- ຂຽນຊີວະປະວັດຫຍໍ້ວຽກງານທີ່ໄດ້ຮັບຜົນ.
- ຝຶກຊ້ອມວິທີການສຳພາດງານທີ່ພິສູດຜົນໄດ້.
- ຊອກຫານາຍຈ້າງທ້ອງຖິ່ນບ່ອນທີ່ເປີດຮັບສະມັກງານ.
- ຕິດຕໍ່ພົວພັນທ່ານກັບວຽກງານທີ່ໃຫ້ຄ່າຈ້າງສູງສຸດທີ່ເໝາະສົມກັບທ່ານ.
- ມີຄວາມໝັ້ນໃຈເມື່ອທ່ານຫາກພົບ ແລະ ເວົ້າລົມກັບນາຍຈ້າງທັງຫລາຍ.

# ໂອກາດສຳລັບການສຶກສາ ແລະການຝຶກອົບຮົມ

**ເປີດປະຕູສູ່ຄວາມກ້າວໜ້າໃນວຽກງານແລະວິຊາຊີບ ແລະຫາເງິນໄດ້ຫລາຍຂຶ້ນ.**

- ໃຫ້ຮຽນຈົບຊັ້ນມັດທະຍົມຕອນປາຍຫລືສຳເຣັດຄວາມທຽບເທົ້າຊັ້ນມັດທະຍົມຕອນປາຍຂອງທ່ານ.
- ປັບປຸງພາສາອັງກິດຂອງທ່ານທາງດ້ານການອ່ານ, ການຂີດຂຽນ, ແລະວິຊາເລກໃນຫລັກສູດການສຶກສາຂັ້ນພື້ນຖານສຳຣັບຜູ້ໃຫຍ່ (ABE) ຫລືຫ້ອງຮຽນພາສາອັງກິດເປັນພາສາທີ່ສອງ (ESL).
- ຮຽນຮູ້ຄວາມຊຳນານໃນວຽກງານແນວໃໝ່ຢູ່ໃນໂຄງການວິຊາສະເພາະ,ວິຊາການຊ່າງ, ຫລືໂຄງການວິຊາຊີບຕ່າງໆ.
- ຮຽນຮູ້ກ່ຽວກັບການຊ່ວຍເຫລືອທຶນການສຶກສາແລະການບໍຣິການອູ້ມຊູນັກສຶກສາ.

# ປະສົບປະການວຽກງານ

**ມັນມີໂຄງການປະສົບປະການວຽກງານຫລາຍໆໂຄງການທີ່ຈະສະເນີໂອກາດໃຫ້ທ່ານທີ່ຈະ:**

- ໄດ້ຄວາມຊຳນານວຽກງານທີ່ມີຄຸນຄ່າຕາມບ່ອນເຮັດງານ.
- ປັບປຸງຄວາມຊຳນານໃນບ່ອນເຮັດວຽກເພື່ອຕຽມທ່ານເຂົ້າສູ່ໜ້າວຽກງານໃນອະນາຄົດ.
- ຊ່ວຍທ່ານຈັດການນຳໄດ້ດີກວ່າເກົ່ານຳຄວາມຫຍຸ້ງຍາກໃນຊີວິດຂອງທ່ານ.
- ມີຊ່ອງທາງໄດ້ມີໂອກາດໃນການຝຶກອົບຮົມ ແລະການສຶກສາໃນຂະນະທີ່ເຮັດວຽກຢູ່.
- ຝຶກແອບເຄື່ອງມືທີ່ຈະຊ່ວຍທ່ານ ແລະ ຄອບຄົວຂອງທ່ານໄດ້ອອກຈາກເງິນຊ່ວຍເຫລືອ TANF.
- ທຳການຕິດຕໍ່ພົວພັນນຳນາຍຈ້າງ ແລະ ເຮັດການຕິດຕໍ່ຖາມເບິ່ງເບື້ອງຫລັງ.



# ການຝາກເດັກນ້ອຍ

- ພວກເຮົາອາດຈະຊ່ວຍຈ່າຍຄ່າຂອງການຝາກເດັກນ້ອຍໄດ້ໃນຂະນະເວລາທີ່ທ່ານໄປເຮັດວຽກ, ຫລືໃນບາງກໍຣະນີ, ໄປເຂົ້າໂຮງຮຽນ.
- ຖ້າມີເງື່ອນໄຂ,ທ່ານພຽງແຕ່ຈະໄດ້ຈ່າຍສ່ວນນຶ່ງເທົ່ານັ້ນຂອງຄ່າການຝາກເດັກນ້ອຍ, ສໍາລັບບາງຄອບຄົວ, ກໍ່ຈ່າຍໜ້ອຍຈົນຮອດ $0.
- ມີຫລາຍໆປະເພດຂອງຜູ້ໃຫ້ການບໍຣິການຝາກເດັກນ້ອຍໃຫ້ທ່ານເລືອກເອົາ.

**ເພື່ອຄວາມຊ່ວຍເຫລືອຊອກຫາບ່ອນຝາກເດັກນ້ອຍທີ່ມີ**

**ການອະນຸຍາດ,ໃຫ້ໂທຫາ Child Care Aware ໄດ້ທີ່:**

**1-844-626-8687**

# ການອູ້ມຊູດ້ານວຽກງານ

**ການບໍຣິການອູ້ມຊູໂຄງການ WorkFirst ຈ່າຍເງິນໃຫ້ສໍາລັບສິ່ງຕ່າງໆທີ່ທ່ານຕ້ອງການເພື່ອຈະເຮັດວຽກ, ຊອກວຽກ, ຫລືຕຽມຕົວສໍາລັບວຽກງານ.**

**ການບໍຣິການອູ້ມຊູອາດຈະລວມເອົາ:**

- ບັດຂີ່ຣົດເມ
- ເຄື່ອງນຸ່ງສໍາລັບການສໍາພາດແລະການເຮັດວຽກ
- ການສ້ອມແປງຣົດ
- ການປຶກສາ
- ໄດເປີເດັກນ້ອຍ
- ຣາຍຈ່າຍສໍາລັບການສຶກສາ
- ເຄື່ອງອະນາມັຍສ່ວນຕົວ
- ໃບອະນຸຍາດ/ຄ່າທໍານຽມ
- ການຕັດຜົມ
- ເຄື່ອງມືແລະອຸບປະກອນ
- ການວາງແຜນຄອບຄົວ
- ຄ່ານໍ້າມັນຣະຍະທາງ

# ຣາຍຣະອຽດກ່ຽວກັບການວາງແຜນຄອບຄົວ

**ມາເວົ້າກັນວ່າເປັນຫຍັງການວາງແຜນຄອບຄົວຈຶ່ງສຳຄັນ!**

ທ່ານສາມາດຕັດສິນໃຈວ່າເມື່ອໃດທ່ານພ້ອມທີ່ຈະເອົາລູກອີກຄົນນຶ່ງ. ການວາງແຜນຄອບຄົວເອົາທາງເລືອກໃຫ້ທ່ານ ແລະ ຄວບຄຸມອະນາຄົດຂອງການເງິນຂອງທ່ານ.

- ທ່ານສາມາດຕິດຕໍ່ຫາຫ້ອງການຂອງທ່ານຫມໍຂອງທ່ານ, ຮ້ານຂາຍຢາ, ຫລືຜູ້ບໍຣິການດ້ານການວາງແຜນຄອບຄົວເພື່ອຣາຍຣະອຽດເພີ້ມເຕີມ.
- ເຂົາເຈົ້າສາມາດອະທິບາຍໃຫ້ທ່ານຟັງວ່າແບບວິທີການຄຸມກຳເນີດແບບໃດແດ່ຈະມີໄວ້ໃຫ້ເພື່ອໃຫ້ທ່ານຕັດສິນໃຈເອົາວ່າແບບວິທີໃດຈະໃຊ້ການໄດ້ດີທີ່ສຸດສຳລັບທ່ານ.
- ບັດບໍຣິການພະຍາບານຂອງທ່ານຈະຈ່າຍສຳລັບຄ່າຢາຄຸມກຳເນີດທີ່ທ່ານໝໍສັ່ງຊື້, ຢາຄຸມກຳເນີດສຸກເສີນ, ພ້ອມທັງແບບວິທີຄຸມຊື້ຈາກຫ້າງຮ້ານທີ່ທ່ານໝໍບໍ່ໄດ້ສັ່ງ.

# ການຄຸ້ມກັນການປິ່ນປົວສຸຂະພາບ

**ຖ້າຫາກວ່າທ່ານບໍ່ມີການຄຸ້ມກັນການປິ່ນປົວສຸຂະພາບ, ທ່ານສາມາດສະມັກເອົາໄດ້ໂດຍຜ່ານ Washington Healthplanfinder** ໂດຍທາງ:

- ການໂທຫາເລກ **1-855-923-4633**, ຫລື:
- ການຂຽນປະກອບໃບຄຳຮ້ອງທາງອອນລາຍນ໌ໄດ້ທີ່ www.wahealthplanfinder.org, ຫລ
- ການຍື່ນຄຳຮ້ອງທີ່ຖືກຂຽນປະກອບແລ້ວປະໄວ້ຢູ່ຫ້ອງການບໍຣິການຊຸມນຸມຊົນຂອງກົມ DSHS ທ້ອງຖິ່ນ (CSO).



# ເງິນລ້ຽງລູກ

ເງິນລ້ຽງລູກສາມາດ:

- ຖືກເກັບເອົາຈາກພໍ່ແມ່ຜູ້ທີ່ບໍ່ຢູ່ນຳລູກ.
- ຊ່ວຍທ່ານໃຫ້ເປັນອິດສະຣະ.
- ຊ່ວຍລູກຂອງທ່ານໃຫ້ມີຊີວິດດີກວ່າເກົ່າ.
- ເອົາເງິນໃຫ້ທ່ານຕື່ມເພື່ອຈະຊື້ເອົາເຄື່ອງນຸ່ງ,ອາຫານ, ແລະ ສິ່ງຂອງສຳຄັນອື່ນໆ.

**ກະຣຸນາເວົ້ານຳເຈົ້າໜ້າທີ່ການບັງຄັບເກັບເງິນລ້ຽງລູກ**
**ຖ້າຫາກວ່າທ່ານມີຄຳຖາມແນວໃດ, ຫລືໂທຫາ:**

**1-800-442-KIDS**

**(1-800-442-5437)**

# ຣາຍຣະອຽດກ່ຽວກັບຄວາມຣຸນແຮງໃນຄອບຄົວ

- ຄົນໃດຄົນນຶ່ງເຮັດໃຫ້ທ່ານເຈັບປວດຫລືທ່ານໄດ້ຖືກເຈັບປວດມາບໍ່?
- ຢາກໄດ້ຄວາມຊ່ວຍເຫລືອນຳການເຮັດນຳຄົນໃດຄົນນຶ່ງຜູ້ທີ່ຂົ່ມຂູ່ຫລືຕິດຕາມສອດແນມທ່ານບໍ່?
- ທ່ານກັງວົນໃຈບໍ່ວ່າການທີ່ມີສ່ວນຮ່ວມໃນກິຈກັມຂອງໂຄງການ WorkFirst ຫລືການເກັບເງິນລ້ຽງລູກເປັນປົກກະຕິນັ້ນ ອາດເປັນອັນຕະຣາຍຫລືອາດເຮັດໃຫ້ສິ່ງຕ່າງໆນັ້ນຍາກສຳຣັບທ່ານຫລືລູກຂອງທ່ານ?

ຖ້າດັ່ງນັ້ນ, ພວກເຮົາສາມາດສົ່ງທ່ານຕໍ່ໄປຫາຄົນທີ່ສາມາດຊ່ວຍທ່ານວາງແຜນເພື່ອຄວາມປອດພັຍຂອງທ່ານ, ສືບຕໍ່ໃຫ້ຄວາມອູ້ມຊູດ້ານອາຣົມເປັນປົກກະຕິ, ແລະ ຕິດຕໍ່ທ່ານໄປຫາແຫລ່ງການຊ່ວຍເຫລືອຕ່າງໆທີ່ເປັນປະໂຍດ.

ພວກເຮົາຍັງອາດໃຫ້ອະພັຍແກ່ທ່ານຈາກກິຈກັມການເຮັດວຽກຕ່າງໆ ແລະ ການເກັບເງິນລ້ຽງລູກ—ກະຣຸນາເວົ້າລົມກັບຜູ້ຈັດການເອກສານຂອງກົມ DSHS ຂອງທ່ານ ເພື່ອຣາຍລະອຽດເພີ່ມເຕີມ.

**ທ່ານຍັງສາມາດຕິດຕໍ່ຫາສາຍດ່ວນເຣື່ອງຄວາມຣຸນແຮງໃນຄອບຄົວດັ່ງທີ່ເລກ 1-800-799-7233 ເພື່ອຣາຍຣະອຽດເພີ່ມເຕີມ, ການສະເນີສົ່ງຕໍ່ໄປຫາ, ແລະ ການໃຫ້ຄວາມອູ້ມຊູຕ່າງໆ. ການໂທຫາສາຍດ່ວນແມ່ນຟຣີ ແລະ ຖືກເກັບໄວ້ເປັນຄວາມລັບສ່ວນຕົວນຳອີກ.**

# ການອອກຈາກໂຄງການ WorkFirst?

## ທ່ານສາມາດໄດ້ຮັບການຊ່ວຍເຫລືອເມື່ອທ່ານອອກຈາກໂຄງການ WorkFirst

### ການບໍລິການອູ້ມຊູ

- ທ່ານອາດຈະມີເງື່ອນໄຂໄດ້ຮັບການຊ່ວຍເຫລືອກ່ຽວພັນນຳການຂົນສົ່ງໄປມາເຊັ່ນວ່ານ້ຳມັນຣົດ,ບັດຂີ່ຣົດເມແລະການສ້ອມແປງຣົດຮອດ 5 ເດືອນ.

### ການຊ່ວຍເຫລືອອາຫານຜັນປ່ຽນຕໍ່ມາ

- ທ່ານຈະມີເງື່ອນໄຂໄດ້ຮັບການຊ່ວຍເຫລືອອາຣາມດຳເນີນຕໍ່ໄປຮອດ 5 ເດືອນ. ການຊ່ວຍເຫລືອອາຫານຫລັງຈາກນັ້ນຈະຂື້ນນຳລາຍໄດ້ຂອງທ່ານ, ລາຍຈ່າຍຂອງການອາສັຍຢູ່, ແລະຂະນາດຂອງຄອບຄົວຂອງທ່ານ.

### ການຄຸ້ມກັນການປິ່ນປົວສຸຂະພາບ

- ທ່ານອາດຈະມີເງື່ອນໄຂໄດ້ຮັບການຄຸ້ມກັນການປິ່ນປົວສຸຂະພາບຢູ່ເຖິງແມ່ນວ່າທ່ານຈະບໍ່ໄດ້ຮັບເງິນ TANF ຕໍ່ໄປອີກແລ້ວກໍຕາມ

### ໂຄງການວຽກງານແລະການຝຶກອົບຮົມຂອງໂຄງການຊ່ວຍເຫລືອອາຫານຈຳເປັນ

- ຖ້າຫາກວ່າທ່ານໄດ້ຮັບການຊ່ວຍເຫລືອອາຫານຈຳເປັນ, ທ່ານຈະສາມາດເຂົ້າເຖິງການຊອກວຽກ,ການຝຶກອົບຮົມເຣື່ອງການຊອກວຽກ, ການບໍຣິການດ້ານການສຶກສາ, ການຝຶກອົບຮົມວິຊາສະເພາະ,ການຈັດໃສ່ວຽກງານຕາມຊຸມນຸມຊົນ, ການບໍຣິການອູ້ມຊູຫລັງຈາກໄດ້ວຽກງານເຮັດ, ແລະ ໂອກາດວຽກງານອື່ນໆ. ຖ້າຫາກວ່າທ່ານໄດ້ເຂົ້າໂຮງຮຽນຄອມເຫລດຂອງຊຸມນຸມຊົນຫລືການຊ່າງແລ້ວ, ການຜັນປ່ຽນມາໃສ່ໂຄງການວຽກງານ ແລະ ການຝຶກອົບຮົມຂອງໂຄງການຊ່ວຍເຫລືອອາຫານຈຳເປັນສາມາດຊ່ວຍເຫລືອທ່ານໃຫ້ສຳເຣັດເປົ້າຫມາຍການສຶກສາຂອງທ່ານ. ເພື່ອລາຍຣະອຽດເພີ້ມເຕີມ, ຈົ່ງຕິດຕໍ່ຫາຫ້ອງການ BFET ຂອງຄອມເຫລດຂອງທ່ານ, ຫລືໄປທີ່ https://www.dshs.wa.gov/esa/community-partnership-program/basic-food-employment-training-bfet

### ເຮືອນຫລວງຂອງກົມ HUD

- ການຊ່ວຍເຫລືອຊອກຫາເຮືອນຢູ່ອາສັຍໃນຣາຄາຕ່ຳ ໄປທີ່ www.hud.gov

### ການເກັບເອົາເງິນລ້ຽງລູກ

- ພວກເຮົາຍັງຈະເກັບເອົາເງິນລ້ຽງລູກຢູ່, ແຕ່ວ່ານັບແຕ່ນີ້ເງິນຈະໄປຫາທ່ານ!

### ການຊ່ວຍເຫລືອນຳການຝາກລູກ

- ທ່ານຍັງຈະໄດ້ຮັບການຊ່ວຍເຫລືອຝາກລູກຢູ່ຖ້າຫາກວ່າທ່ານກຳລັງເຮັດວຽກຢູ່

### ການຊ່ວຍເຫລືອນຳການຊອກວຽກດີກວ່າເກົ່າ

- ໄປຫາຫ້ອງການຽໂຣກສໃຣຈເບ່ອນໃດກໍໄດ້. ທ່ານສາມາດຊອກຫາຫ້ອງການໃກ້ບ້ານທີ່ສຸດ ແລະ ຊອກຫາວຽກໄດ້ທີ່ WorkSourceWA.com

# ການອອກຈາກໂຄງການ WorkFirst? ຕໍ່...

ເງິນໂຍະຍານພາສີຣາຍໄດ້ເຮັດວຽກເອົາ **(EITC)**

- ການໂຍະຍານພາສີສຳລັບຄອບຄົວເຮັດວຽກທີ່ມີຣາຍໄດ້ຕ່ຳ: ແວບໄຊທ໌ຂອງ EITC: www.irs.gov ແລະ ຊອກຫາ EITC.

ໂຄງການ **LIHEAP**

- ຊ່ວຍຈ່າຍຄ່າອາຍອຸ່ນ ແລະ ອາຍເຢັນແວບໄຊທ໌ຂອງ LIHEAP: www.commerce.wa.gov ແລະຊອກຫາ LIHEAP.

# ແຫລ່ງຊ່ວຍເຫລືອຕາມທ້ອງຖິ່ນ

ແວບໄຊທ໌ຂອງ **WorkFirst**:

**www.workfirst.wa.gov/**

ສາຍງານຣາຍຣະອຽດຂອງຣັດວໍຊິງຕັນ **211**:

**http://win211.org**

ແວບໄຊທ໌ **Washington Connection**

**http://washingtonconnection.org**

- ຄັງແຈກຢາຍອາຫານທ້ອງຖິ່ນ
- ການພົວພັນທ້ອງຖິ່ນ
- ຄລີນິກອະນາມັຍທ້ອງຖິ່ນ
- ແຫລ່ງຊ່ວຍເຫລືອເກັບເງິນລ້ຽງລູກ ແລະ ທ້ອງຖິ່ນ
- ເຮືອນຢູ່ອາສັຍ

ຖ້າຫາກວ່າທ່ານມີຄຳຖາມຫລືຕ້ອງການຣາຍຣະອຽດ
ເພີ້ມເຕີມ, ກະຣຸນາຕິດຕໍ່ຫາຫ້ອງການ **CSO** ຂອງທ່ານຫລືສູນກາງປະຊາສັມພັນທາງໂທຣະສັບ.

DSHS 22-1125 LA (Rev. 10/24) Laotian